ສຳນັກງານ ຄຄຊ
ຂາເຂົ້າ ເລກທີ 0883
ວັນທີ 24 AUG 2018
ໂທລະສັບ 021 217770

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ທະນາຄານແຫ່ງ ສປປ ລາວ

ຫ້ອງການ

ເລກທີ: 35 /ຫກ

ນະຄອນຫຼວງວຽງຈັນ, ວັນທີ: 22 ສິງຫາ 2018

# ບົດລາຍງານ

## ການເຄື່ອນໄຫວຂອງທະນາຄານແຫ່ງ ສປປ ລາວ ປະຈຳອາທິດທີ 06-10/08/2018 ແລະ ແຜນການເຄື່ອນໄຫວໃນອາທິດຕໍ່ໄປ

### I. ວຽກງານການເມືອງແນວຄິດ

ສະພາບການເມືອງແນວຄິດຂອງພະນັກງານພາຍໃນຂະແໜງທະນາຄານມີຄວາມສະຫງົບປົກກະຕິ, ພະນັກງານມີຄວາມອຸ່ນອ່ຽນໜຸ້ນທ່ຽງ, ເຊື່ອໝັ້ນຕໍ່ການນຳພາຂອງພັກ-ລັດ, ມີສະຕິເຄົາລົບຕໍ່ການຈັດຕັ້ງ, ລະບຽບກົດໝາຍ ແລະ ຕັ້ງໜ້າປະຕິບັດໜ້າທີ່ວຽກງານຕາມທີ່ໄດ້ຮັບມອບໝາຍຢ່າງຕັ້ງໜ້າ, ມີຄວາມສາມັກຄີທັງພາຍໃນ ແລະ ພາຍນອກເປັນຢ່າງດີ.

### II. ການເຄື່ອນໄຫວວຽກງານວິຊາສະເພາະ

### 1. ສະພາບເສດຖະກິດເງິນຕາສາກົນ

#### 1.1 ອັດຕາແລກປ່ຽນສາກົນ

ອັດຕາແລກປ່ຽນຢູ່ຕະຫຼາດສາກົນອາທິດນີ້ທຽບໃສ່ອາທິດຜ່ານມາເຫັນວ່າ: ເງິນໂດລາສະຫະລັດແຂງຄ່າຂຶ້ນ 1,00% ທຽບໃສ່ເອີໂຣ ເນື່ອງຈາກທີ່ພາຍຫຼັງກະຊວງແຮງງານຂອງສະຫາລັດອາເມລິກາ ລາຍງານວ່າ ປະຊາຊົນທີ່ຂໍສະຫວັດດີການວ່າງງານຄັ້ງທຳອິດ ຂອງອາທິດທີ 04/08/2018 ຫຼຸດລົງຢູ່ທີ່ ຈຳນວນ 213.000 ຄົນ ຈາກ 219.000 ຄົນ ໃນອາທິດທີ 28/07/2018 ບວກກັບເບື້ອງຂອງສະຫະພາບເອີຣົບ ທີ່ຕົວເລກການສັ່ງຊື້ຂອງໂຮງງານ ໃນເດືອນ 6/2018 ຫຼຸດລົງຢູ່ທີ່ 0,8% ຈາກ ເພີ່ມຂຶ້ນ 4,4% ໃນປີຜ່ານມາ.

| ສະກຸນເງິນຕ່າງໆທຽບກັບໂດລາ | ອາທິດຜ່ານມາ 30/07-03/08/2018 | ອາທິດນີ້ 06-10/08/2018 | ເປີເຊັນ ແຂງຄ່າ(+) / ອ່ອນຄ່າ(–) |
|---|---|---|---|
| ໂດລາ/ເອີໂຣ | 1,1574 | 1,1459 | 1,00% |
| ເຢນ/ໂດລາ | 111,68 | 110,93 | 0,68% |
| ບາດ/ໂດລາ | 33,340 | 33,250 | 0,27% |
| ເປໂຊ/ໂດລາ | 53,12 | 53,15 | -0,07% |
| ຣູເປັຍ/ໂດລາ | 14.490,00 | 14.470,00 | 0,14% |
| ໂດລາສິງກະໂປ/ໂດລາ | 1,3703 | 1,3710 | -0,05% |
| ຢວນ/ໂດລາ | 6,8711 | 6,8516 | 0,28% |

### 1.2 ສະພາບລາຄານ້ຳມັນ ແລະ ຄຳໃນຕະຫຼາດໂລກ

- ລາຄານ້ຳມັນຫຼຸດລົງ 3,40% ຈາກ 69,11 ໂດລາ/ບາເຣວ ມາເປັນ 66,76 ໂດລາ/ບາເຣວ ພາຍຫຼັງຄັງສຳຮອງນ້ຳມັນແອັດຊັງຂອງຂອງສະຫາລັດອາເມລິກາ ເພີ່ມຂຶ້ນ 2,90 ລ້ານບາເຣວ ໃນອາທິດທີ 03/08/2018 ຈາກຫຼຸດລົງ 2,54 ລ້ານບາເຣວ ໃນອາທິດຜ່ານມາ;
- ລາຄາຄຳເພີ່ມຂຶ້ນ 0,18% ຈາກ 1.207,47 ໂດລາ/ອອນ ມາເປັນ 1.209,61 ໂດລາ/ອອນ ເນື່ອງຈາກຄວາມຜັນຜວນຂອງຄ່າເງິນໂດລາ ເຮັດໃຫ້ນັກລົງທຶນເຂົ້າຊື້ຄຳ ແລະ ສັນຍາຊື້-ຂາຍຄຳ ເພື່ອປ້ອງກັນຄວາມສ່ຽງ.

## 2. ສະພາບການຊື້-ຂາຍອັດຕາແລກປ່ຽນ

### 2.1 ສະພາບອັດຕາແລກປ່ຽນພາຍໃນ

ສະພາບອັດຕາແລກປ່ຽນອາທິດນີ້ທຽບໃສ່ອາທິດຜ່ານມາ ເຫັນວ່າເງິນກີບທຽບໃສ່ເງິນໂດລາອ່ອນຄ່າລົງ 0,19% ແລະ ອ່ອນຄ່າລົງ 0,45% ເມື່ອທຽບໃສ່ສະກຸນເງິນບາດ. ທຽບໃສ່ທ້າຍປີຜ່ານມາເຫັນວ່າເງິນກີບອ່ອນຄ່າລົງ 3,53% ທຽບໃສ່ສະກຸນເງິນໂດລາ ແລະ ອ່ອນຄ່າລົງ 2,58% ທຽບໃສ່ສະກຸນເງິນບາດ.

| ອັດຕາ | ອາທິດຜ່ານມາ 03/08/2018 | | | ອາທິດນີ້ 10/08/2018 | | | %ທຽບອາທິດຜ່ານມາ | | | ທຽບທ້າຍປີຜ່ານມາ | | |
|---|---|---|---|---|---|---|---|---|---|---|---|---|
| | ຊື້ | ຂາຍ | ສະເລັ່ຍ | ຊື້ | ຂາຍ | ສະເລັ່ຍ | ຊື້ | ຂາຍ | ສະເລັ່ຍ | ຊື້ | ຂາຍ | ສະເລັ່ຍ |
| ອັດຕາທະຄານ[1] | | | | | | | | | | | | |
| ໂດລາ | 8.590,16 | 8.618,66 | 8.600,03 | 8.601,39 | 8.635,00 | 8.616,62 | -0,13% | -0,19% | -0,19% | -3,49% | -3,57% | -3,53% |
| ບາດ | 261,07 | 262,22 | 261,76 | 262,24 | 263,42 | 262,94 | -0,45% | -0,45% | -0,45% | -2,75% | -2,53% | -2,58% |

### 2.2 ສະພາບຖານເງິນຕາແລະປະລິມານເງິນ M2

- ຖານເງິນຕາ ຫຼຸດລົງ 0,03% ເມື່ອທຽບໃສ່ອາທິດຜ່ານມາ, ຖ້າທຽບໃສ່ໄລຍະດຽວກັນຂອງປີຜ່ານມາ ເພີ່ມຂຶ້ນ 8,70%;
- ປະລິມານເງິນ M2 ຫຼຸດລົງ 0,23% ເມື່ອທຽບໃສ່ອາທິດຜ່ານມາ, ຖ້າທຽບໃສ່ໄລຍະດຽວກັນຂອງປີຜ່ານມາ ເພີ່ມຂຶ້ນ 11,64%.

### 2.3 ການຊື້-ຂາຍເງິນຕາ (ເງິນໂດລາ ແລະ ເງິນບາດ) ຂອງທົ່ວລະບົບທະນາຄານທຸລະກິດ

- ການຊື້-ຂາຍເງິນຕາຕ່າງປະເທດ (ເງິນໂດລາ ແລະ ເງິນບາດ) ຂອງບັນດາທະນາຄານທຸລະກິດກັບລູກຄ້າພາຍໃນປະຈຳອາທິດ (03-09/08/2018) ເຫັນວ່າ ທທກ ຂາຍເງິນໂດລາສຸດທິ 15,31 ລ້ານໂດລາ (ໃນນີ້ຊື້ເງິນໂດລາໄດ້ 22,33 ລ້ານໂດລາ ແລະ ຂາຍເງິນໂດລາໄດ້ 37,64 ລ້ານໂດລາ) ແລະ ຂາຍເງິນບາດສຸດທິ 157,81 ລ້ານບາດ (ໃນນີ້ຊື້ເງິນບາດໄດ້ 181,10 ລ້ານບາດ ແລະ ຂາຍເງິນບາດໄດ້ 338,91 ລ້ານບາດ); ມູນຄ່າການຊື້-ຂາຍເງິນໂດລາ ແລະ ເງິນບາດເມື່ອທຽບໃສ່ອາທິດຜ່ານມາເຫັນວ່າເງິນໂດລາ ຫຼຸດລົງ 12,48% ແລະ ເງິນບາດ ຫຼຸດລົງ 31,74%;
- ການຊື້-ຂາຍລະຫວ່າງ ທຫລ ກັບ ທທກ ເຫັນວ່າ: ທຫລ ຂາຍເງິນໂດລາໃຫ້ທະນາຄານທຸລະກິດ ຈຳນວນ 15,95 ລ້ານໂດລາ ແລະ ຂາຍເງິນບາດ ຈຳນວນ 119,81 ລ້ານບາດ;
- ການຊື້-ຂາຍລະຫວ່າງທະນາຄານທຸລະກິດດ້ວຍກັນເຫັນວ່າ: ມີປະລິມານຊື້-ຂາຍເງິນໂດລາ ຈຳນວນ 0,90 ລ້ານໂດລາ ແລະ ເງິນບາດ ຈຳນວນ 5,15 ລ້ານບາດ;
- ການຊື້-ຂາຍລະຫວ່າງ ທຫລ ກັບພາກສ່ວນອື່ນໆເຫັນວ່າ: ບໍ່ມີການຊື້-ຂາຍເງິນໂດລາ ແລະ ເງິນບາດ.

---
1% ການປ່ຽນແປງຂອງອັດຕາແລກປ່ຽນທະນາຄານທຸລະກິດ ແມ່ນໄດ້ຈາກອັດຕາສະເລ່ຍຖ່ວງນ້ຳໜັກ

ສະພາບການຊື້-ຂາຍເງິນຕາຕ່າງປະເທດ (ຫົວໜ່ວຍ: ລ້ານ)

| | ອາທິດທີ່ຜ່ານມາ 27/07-02/08/2018 | | ອາທິດນີ້ 03-09/08/2018 | | (%) +ເພີ່ມຂຶ້ນ/-ຫຼຸດລົງ | |
|---|---|---|---|---|---|---|
| | ໂດລາ | ບາດ | ໂດລາ | ບາດ | ໂດລາ | ບາດ |
| **1. ການຊື້ເງິນຕາຕ່າງປະເທດ** | **32,32** | **216,90** | **22,33** | **181,10** | **-31,04%** | **-16,78%** |
| - ທ/ຄທຸລະກິດລັດ | 18,16 | 75,53 | 11,53 | 50,45 | -36,51% | -33,21% |
| - ທ/ຄທຸລະກິດອື່ນໆ | 14,16 | 141,37 | 10,80 | 130,65 | -24,05% | -8,04% |
| **2. ການຂາຍເງິນຕາຕ່າງປະເທດ** | **36,08** | **543,76** | **37,64** | **338,91** | **4,15%** | **-37,72%** |
| - ທ/ຄທຸລະກິດລັດ | 23,36 | 279,87 | 9,77 | 84,45 | -58,18% | -69,83% |
| - ທ/ຄທຸລະກິດອື່ນໆ | 12,72 | 263,89 | 27,87 | 254,46 | 118,08% | -3,73% |
| **ຊື້-ຂາຍສຸດທິ ທທກ** | **-3,76** | **-326,86** | **-15,31** | **-157,81** | **307,18%** | **-51,68%** |
| - ຜົດດ່ຽງຊື້-ຂາຍ | -11,63% | -150,70% | -68,56% | -87,14% | 490,55% | -41,94% |
| **- ມູນຄ່າການຊື້-ຂາຍ** | **68,40** | **760,66** | **59,97** | **520,01** | **-12,48%** | **-31,74%** |
| **3. ການຊື້-ຂາຍ ລະຫວ່າງ ທຫລ ກັບ ທທກ** | **-17,06** | **-63,60** | **-15,95** | **-119,81** | | |
| - ທຫລ ຊື້ຈາກ ທທກ | 3,50 | 0,15 | 0,00 | 0,00 | | |
| - ທຫລ ຂາຍໃຫ້ ທທກ | 20,56 | 63,75 | 15,95 | 119,81 | | |
| **4. ຊື້-ຂາຍ ລະຫວ່າງ ທທກ ດ້ວຍກັນ** | **0,29** | **23,17** | **0,90** | **5,15** | | |
| 5. ທຫລ ກັບ ພາກສ່ວນອື່ນໆ | **0,00** | **0,00** | **0,00** | **0,00** | | |
| -ທຫລ ຊື້ຈາກພາກສ່ວນອື່ນໆ | 0,00 | 0,00 | 0,00 | 0,00 | | |
| -ທຫລ ຂາຍໃຫ້ພາກສ່ວນອື່ນໆ | 0,00 | 0,00 | 0,00 | 0,00 | | |

**2.4 ສະພາບອັດຕາເງິນເຟີ້**

ອັດຕາເງິນເຟີ້ໃນເດືອນ 08/2018 ຄາດວ່າຈະຢູ່ໃນລະດັບ 2,75% (ຕົວເລກຄາດຄະເນ).

**2.5 ການຄຸ້ມຄອງເງິນຕາຕ່າງປະເທດ**

ທະນາຄານແຫ່ງ ສປປ ລາວ ໄດ້ອະນຸຍາດໃຫ້ທະນາຄານທຸລະກິດນຳເງິນຕາຕ່າງປະເທດເຂົ້າມາ ສປປ ລາວ ໃນອາທິດນີ້ ເພີ່ມຂຶ້ນ 11,6% ທຽບໃສ່ອາທິດຜ່ານມາ ໂດຍມີຈຳນວນ 57,11 ລ້ານໂດລາສະຫະລັດທຽບເທົ່າ. ພ້ອມນີ້ ໄດ້ອະນຸຍາດໃຫ້ທະນາຄານທຸລະກິດນຳເງິນຕາຕ່າງປະເທດອອກນອກ ສປປ ລາວ ຫຼຸດລົງ 13,7% ທຽບໃສ່ອາທິດຜ່ານມາ ໂດຍມີຈຳນວນ 65,32 ລ້ານໂດລາສະຫະລັດທຽບເທົ່າ.

**3. ສະພາບການເຄື່ອນໄຫວຊຳລະສະສາງຜ່ານທະນາຄານແຫ່ງ ສປປ ລາວ**

ແຊັກເຄື່ອນໄຫວຜ່ານສູນຊຳລະສະສາງຂອງ ທຫລ ໃນອາທິດນີ້ຈຳນວນ 654 ສະບັບ ທຽບໃສ່ອາທິດຜ່ານມາ ຫຼຸດລົງ 23 ສະບັບ ເທົ່າກັບ 3,4% ລວມຈຳນວນເງິນທີ່ໂອນຜ່ານທັງໝົດ 293,63 ຕື້ກີບ ທຽບໃສ່ອາທິດຜ່ານມາ ເພີ່ມຂຶ້ນ 11,01 ຕື້ກີບ ເທົ່າກັບ 3,9%.

- ການໂອນເງິນຜ່ານລະບົບຊຳລະສະສາງແບບມູນຄ່າສູງ (RTGS) ລະຫວ່າງວັນທີ (03-09/08/2018) ມີທັງໝົດ 3.715 ຄັ້ງ ເຊິ່ງປະກອບມີດັ່ງນີ້:

- **ສະກຸນເງິນກີບ**: ມີການເຄື່ອນໄຫວຈຳນວນ 3.675 ຄັ້ງ, ມູນຄ່າການໂອນໃນອາທິດນີ້ທຽບໃສ່ອາທິດຜ່ານມາ ເຫັນວ່າ ຫຼຸດລົງ ຈຳນວນ 129 ຕື້ກີບ ຈາກ 949,93 ຕື້ກີບ ມາເປັນ 821,11 ຕື້ກີບ ເທົ່າກັບ 13,56%;
- **ກະຊວງການເງິນ**: ມີການເຄື່ອນໄຫວຈຳນວນ 40 ຄັ້ງ, ມູນຄ່າການໂອນໃນອາທິດນີ້ທຽບໃສ່ອາທິດຜ່ານມາ ເຫັນວ່າ ຫຼຸດລົງ ຈຳນວນ 95,96 ຕື້ກີບ ຈາກ 126,93 ຕື້ກີບ ມາເປັນ 30,97 ຕື້ກີບ ເທົ່າກັບ 75,59%.

4. <u>ສະພາບການຊື້-ຂາຍຫຼັກຊັບໃນຕະຫຼາດຫຼັກຊັບລາວ</u>

ດັດຊະນີຕະຫຼາດຫຼັກຊັບລາວໃນອາທິດນີ້ປິດຢູ່ທີ່ 888,12 ຈຸດ ຫຼຸດລົງ ຈາກ 894,86 ຈຸດ ຫຼື ເທົ່າກັບ 1,42% ເມື່ອທຽບໃສ່ອາທິດຜ່ານມາ, ຕະຫຼອດອາທິດນີ້ ມີປະລິມານຊື້-ຂາຍຮຸ້ນທັງໝົດ 139.200 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 668,12 ລ້ານກີບ ເພີ່ມຂຶ້ນ 120,04% ທຽບໃສ່ອາທິດຜ່ານມາ, ໂດຍອາທິດນີ້ ມີຜູ້ລົງທຶນຕ່າງປະເທດຊື້-ຂາຍສະເລ່ຍກວມເອົາ 44,56% ຂອງມູນຄ່າການຊື້-ຂາຍທັງໝົດ. ສາເຫດການຫຼຸດລົງຂອງດັດຊະນີ ຕລຊລ ແມ່ນມາຈາກການປັບຕົວຫຼຸດລົງ ຂອງລາຄາຮຸ້ນ BCEL, EDL-Gen, SVN ແລະ LWPC.

➢ <u>ສະພາບການຊື້-ຂາຍຮຸ້ນຂອງຕະຫຼາດຫຼັກຊັບລາວ (LSX)</u>

| ບໍລິສັດ | ອາທິດກ່ອນ | | | ອາທິດນີ້ | | | %ປ່ຽນແປງ | | | |
|---|---|---|---|---|---|---|---|---|---|---|
| | ຈຳນວນ (ຮຸ້ນ) | ມູນຄ່າການຊື້-ຂາຍ (ກີບ) | ລາຄາ ສະເລ່ຍ (ກີບ) | ຈຳນວນ (ຮຸ້ນ) | ມູນຄ່າການຊື້-ຂາຍ (ກີບ) | ລາຄາ ສະເລ່ຍ (ກີບ) | ຈຳນວນ | ມູນຄ່າການ ຊື້-ຂາຍ | ລາຄາ ປ່ຽນແປງ (ກີບ) | ລາຄາ ປ່ຽນແປງ (%) |
| **BCEL** | 15.400 | 86.715.000 | 5.700 | **76.200** | **418.570.000** | **5.650** | 394,81 | 382,70 | -0,88 | 15.400 |
| **EDL-GEN** | 46.300 | 199.090.000 | 4.300 | **55.700** | **234.765.000** | **4.250** | 20,30 | 17,92 | -1,16 | 46.300 |
| **LWPC** | - | - | 8.800 | **-** | **-** | **8.750** | - | - | -0,57 | - |
| **PTL** | - | - | 1.650 | **100** | **170.000** | **1.700** | - | - | 3,03 | - |
| **SVN** | 5.900 | 13.460.000 | 2.200 | **6.200** | **12.220.000** | **1.800** | 5,08 | - 9,21 | -18,18 | 5.900 |
| **PCD** | - | - | 1.200 | **-** | **-** | **1.200** | - | - | - | - |
| **LCC** | 1.900 | 4.370.000 | 2.300 | **1.000** | **2.400.000** | **2.400** | - 47,37 | -45,08 | 4,35 | 1.900 |
| ທັງໝົດ | 69.500 | 303.635.000 | - | **139.200** | **668.125.000** | - | 100,29 | 120,04 | | 69.500 |

5. <u>ວຽກງານອື່ນໆທີ່ພົ້ນເດັ່ນ.</u>

- **ສຳເລັດການເຂົ້າຮ່ວມກອງປະຊຸມ, ຈັດກອງປະຊຸມ ແລະ ພິທີຕ່າງໆ:** ❶ ກອງປະຊຸມລັດຖະບານສະໄໝວິສາມັນປະຈຳເດືອນ 08/2018, ❷ ກອງປະຊຸມສະພາບໍລິຫານ ທຫລ ຄັ້ງທີ I ປະຈຳປີ 2018, ❸ ກອງປະຊຸມວ່າດ້ວຍວຽກງານຊາຍແດນແຫ່ງຊາດ, ❹ ກອງປະຊຸມປຶກສາຫາລືກ່ຽວກັບຮ່າງກົດໝາຍວ່າດ້ວຍທະນາຄານທຸລະກິດ (ສະບັບປັບປຸງ), ❺ ກອງປະຊຸມປຶກສາຫາລືຜົນການກວດກາຕະຫຼາດຫຼັກຊັບລາວຈາກຄະນະກວດສອບ ຕະຫຼາດຫຼັກຊັບເກົາຫຼີ, ❻ ກອງປະຊຸມປຶກສາຫາລືກ່ຽວກັບການຄົ້ນຄວ້າສ້າງແຜນດຸ່ນດ່ຽງແຫຼ່ງທຶນ, ❼ ກອງປະຊຸມຄະນະຄົ້ນຄວ້ານິຕິກຳຄຸ້ມຄອງວຽກງານການເງິນເອເລັກໂຕຣນິກ, ❽ ກອງປະຊຸມຄະນະວິຊາການຊຸກຍູ້ພັນທະບັດລັດຖະບານ ເຂົ້າຈົດທະບຽນໃນຕະຫຼາດຫຼັກຊັບລາວ ແລະ ❾ ຈັດຝຶກອົບຮົມໃນຫົວຂໍ້ "ການບໍລິຫານກະແສທຶນ ແລະ ວິກິດການ".

III. <u>ແຜນວຽກຈຸດສຸມອາທິດຕໍ່ໄປ:</u>

- ສືບຕໍ່ດຳເນີນນະໂຍບາຍເງິນຕາ ແລະ ອັດຕາແລກປ່ຽນທີ່ໄດ້ກຳນົດໄວ້ໃນແຜນວຽກປະຈຳປີ ເພື່ອຮັກສາສະຖຽນລະພາບເງິນຕາແຫ່ງຊາດໃຫ້ມີຄວາມໝັ້ນທ່ຽງ; ສືບຕໍ່ຕິດຕາມການຈັດຕັ້ງປະຕິບັດນະໂຍບາຍອັດຕາດອກເບ້ຍຂອງ ທຫລ ແລະການສ້າງໂປຼແກຼມຕິດຕາມນະໂຍບາຍດັ່ງກ່າວຢ່າງໃກ້ຊິດ;
- ສືບຕໍ່ຕິດຕາມ, ກວດກາການເຄື່ອນໄຫວຂອງບັນດາທະນາຄານທຸລະກິດ ແລະ ສະຖາບັນການເງິນທີ່ບໍ່ແມ່ນທະນາຄານ ທີ່ໄດ້ຮັບອະນຸຍາດຈາກ ທຫລ ຢ່າງໃກ້ຊິດ;

- **ກະກຽມຈັດກອງປະຊຸມ, ເຂົ້າຮ່ວມກອງປະຊຸມ ແລະ ພິທີຕ່າງໆ:** ❶ ກອງປະຊຸມສຳມະນາລະດັບສູງ ແລະ ກອງປະຊຸມລະດັບຮອງຜູ້ວ່າການວຽກງານສະຖຽນລະພາບການເງິນ ແລະ ການຄຸ້ມຄອງທະນາຄານຄັ້ງທີ 9, ❷ ກອງປະຊຸມປຶກສາຫາລື ແລະ ເຮັດວຽກຮ່ວມກັບຜູ້ຊ່ຽວຊານ ໃນການກະກຽມສະໝັກເຂົ້າເປັນສະມາຊິກອົງການຄຸ້ມຄອງວຽກງານຫຼັກຊັບສາກົນ (IOSCO) ຄັ້ງທີ III, ❸ ກອງປະຊຸມສຳມະນາບົດລາຍງານການປະເມີນຄວາມສ່ຽງລະດັບຊາດຕ້ານການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍພາຍໃນ ເດືອນສິງຫາ 2018, ❹ ຝຶກອົບຮົມວຽກງານກວດກາ ຄັ້ງທີ X ປະຈຳປີ 2018 ໃຫ້ແກ່ພະນັກງານໃນຂະແໜງການທະນາຄານ ແລະ ❺ ພິທີພົບປະ ແລະ ນຳສະເໜີໃນງານ ນະວັດຕະກຳທາງດ້ານການເງິນ (Fintech) ທີ່ມາຈາກປະເທດສິງກະໂປ;
- ກະກຽມຕ້ອນຮັບການເຂົ້າຢ້ຽມຂໍ່ານັບ ຄະນະຜູ້ວ່າການ ທຫລ ຈາກຜູ້ຕາງໜ້າທະນາຄານໂລກ ປະຈຳ ສປປ ລາວ ຄົນໃໝ່.

ຫົວໜ້າຫ້ອງການ

ພັດສະຖາພອນ ແກ້ວວົງວິຈິດ